ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫລວງວຽງຈັນ

ເລກທີ 04 /ຈນວ.

ລົງວັນທີ 08 AUG 2017

# ຄຳສັ່ງ

## ກ່ຽວກັບ ການລະດົມພົນເປັນທະຫານພັນທະ ທະຫານອາຊີບປະກອບໃຫ້ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ປະຈຳສົກປີ 2017.

ເຖິງ: - ທ່ານຫົວໜ້າກອງບັນຊາການທະຫານ ນະຄອນຫຼວງວຽງຈັນ.

- ບັນດາທ່ານ ເຈົ້າເມືອງ 09 ເມືອງອ້ອມຂ້າງ ນະຄອນຫຼວງວຽງຈັນ.

- ອີງຕາມ ມາດຕາທີ 8, 9, 10 ຂອງກົດໝາຍວ່າດ້ວຍພັນທະປ້ອງກັນຊາດ ສະບັບເລກທີ 25/ສພຊ, ລົງວັນທີ 13 ທັນວາ 2012 ພາກທີ II ແລະ ຄຳສັ່ງແນະນຳຂອງ ກະຊວງປ້ອງກັນປະເທດ ສະບັບເລກທີ 4205/ກປທ, ລົງວັນທີ 22 ພະຈິກ 2013 ວ່າດ້ວຍການຈັດຕັ້ງຜັນ.

- ອີງຕາມ ຄຳສັ່ງແນະນຳ ສະບັບເລກທີ 1309/ກສນ, ລົງວັນທີ 26/06/2017 ກ່ຽວກັບການຈັດຕັ້ງປະຕິບັດວຽກງານລະດົມພົນ ປະຈຳປີ 2017 ຕາມກົດໝາຍພັນທະປ້ອງກັນຊາດ.

- ອີງຕາມ ແຈ້ງການຂອງ ກົມກຳລັງພົນ ສະບັບເລກທີ 2121/ກລພ, ລົງວັນທີ 28/06/2017 ກ່ຽວກັບການມອບຕົວເລກລະດົມພົນ ປະຈຳປີ 2017.

**ເຈົ້າຄອງນະຄອນຫຼວງວຽງຈັນ, ປະທານຄະນະກຳມະການ ປກຊ-ປກສ ນະຄອນຫຼວງວຽງຈັນ**

**ອອກຄຳສັ່ງ:**

**1.** ໃຫ້ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ຮັບຮ້ອນສົມທົບກັບບັນດາເມືອງ ໃນທົ່ວນະຄອນຫຼວງວຽງຈັນ ຈັດຕັ້ງລະດົມພົນເປັນທະຫານພັນທະ, ທະຫານອາຊີບປະກອບໃຫ້ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ໃນສົກປີ 2017 ໃຫ້ໄດ້ທັງໝົດຈຳນວນ 470 ຄົນ, ໃນນັ້ນສົ່ງໃຫ້ກະຊວງປ້ອງກັນປະເທດ 275 ຄົນ, ນະຄອນຫຼວງວຽງ ຈັນ 195 ຄົນ, ໃນນັ້ນ ເປົ້າໝາຍເປັນທະຫານອາຊີບ 25 ຄົນ ແລະ ເປັນທະຫານພັນທະ 170 ຄົນ ລະອຽດດັ່ງນີ້:

1.1 ມອບໃຫ້ 09 ຕົວເມືອງ ໃນນະຄອນຫຼວງວຽງຈັນ ລະດົມຈຳນວນ 280 ຄົນ.

1.2 ມອບໃຫ້ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ລະດົມຈຳນວນ 190 ຄົນ.

**2. ວິທີຈັດຕັ້ງປະຕິບັດ.**

2.1 ໃຫ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມເນື້ອໃນຄໍາສັ່ງແນະນໍາເພີ່ມເຕີມຂອງ ກົມໃຫຍ່ເສນາທິການກອງທັບ ສະບັບເລກທີ 1309/ກສນ, ລົງວັນທີ 26/06/2017 ໃຫ້ທົ່ວເຖິງ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ທັນເວລາ.

2.2 ໃຫ້ຈັດຕັ້ງຄະນະກວດກາລະດົມພົນຂັ້ນບ້ານ ເຊິ່ງປະກອບດ້ວຍ ຂະແໜງກໍາລັງພົນ, ຕໍາຫຼວດ, ແພດ, ປ້ອງກັນພາຍໃນ, ນາຍບ້ານ, ປກສ, ຊາວໜຸ່ມ, ແມ່ຍິງ, ແນວໂຮມ ເພື່ອກວດກາເງື່ອນໄຂຂອງ ຜູ້ສະໝັກເຂົ້າກໍາລັງປ້ອງກັນຊາດ ໃຫ້ຄົບຖ້ວນຕາມມາດຖານທີ່ວາງໄວ້.

2.3 ສໍາລັບມາດຖານເງື່ອນໄຂ ແລະ ຄຸນສົມບັດຂອງເປົ້າໝາຍ ໃນການລະດົມພົນແມ່ນໃຫ້ຄັດເອົາຕາມຄໍາແນະນໍາຂອງ ກະຊວງປ້ອງກັນປະເທດ ສະບັບເລກທີ 4205/ກປທ ແລະ ຂໍ້ກໍານົດ 1681/ກປທ ວ່າດ້ວຍການຈັດຕັ້ງຜັນຂະຫຍາຍ ກົດໝາຍພັນທະປ້ອງກັນຊາດ, ຂໍ້ກໍານົດທີ່ວາງໄວ້.

2.4 ເອົາໃຈໃສ່ເຮັດວຽກງານການເມືອງແນວຄິດກັບ ພໍ່ແມ່ປະຊາຊົນ ແລະ ລູກຫຼານທີ່ນອນໃນເປົ້າໝາຍລະດົມພົນນັ້ນ ໃຫ້ຄວາມຮ່ວມມືຕື່ນຕົວສະໝັກໃຈເຂົ້າໃນວຽກງານລະດົມພົນ ເຊິ່ງຖືເປັນພັນທະຂອງພົນລະເມືອງລາວຕ້ອງໄດ້ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ.

3. ກໍານົດເວລາຈັດຕັ້ງປະຕິບັດ 45 ວັນ ເລີ່ມແຕ່ວັນທີ 10/08/2017 ຫາວັນທີ 23/09/2017 ໃຫ້ສໍາເລັດໃນການລະດົມພົນ ສົກປີ 2017.

4. ເມື່ອໄດ້ຮັບຄໍາສັ່ງສະບັບນີ້ແລ້ວ ຈົ່ງພ້ອມກັນຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ເຂັ້ມງວດ ແລະ ໄດ້ຮັບຜົນດີ, ໃນເວລາຈັດຕັ້ງປະຕິບັດຕົວຈິງ ຫາກມີກໍລະນີພົບຄວາມຫຍຸ້ງຍາກ ໃຫ້ຂໍທິດຊີ້ນໍາຈາກ ຄະນະປະຈໍາພັກ ແລະ ກອງບັນຊາການທະຫານ ນະຄອນຫຼວງວຽງຈັນ ໂດຍໄວ.

5. ຄໍາສັ່ງແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າຄອງ ນະຄອນຫຼວງວຽງຈັນ

ປະທານ ຄະນະກໍາມະການ ປກຊ-ປກສ ນວ.

ປອ.ສິນລະວົງ ຄຸດໄພທູນ

ບ່ອນສົ່ງ:

- ຄະນະປະຈໍາພັກ 11 ສະບັບ;
- ຫ້ອງວ່າການ ກະຊວງປ້ອງກັນປະເທດ 01 ສະບັບ;
- ກອງບັນຊາການ ທະຫານ ນວ 01 ສະບັບ;
- ບັນດາເມືອງ 09 ຕົວເມືອງ ເມືອງລະ 01 ສະບັບ;
- ຫ້ອງການ ປກຊ-ປກສ ນວ 01 ສະບັບ;
- ຫ້ອງການ ພັດທະນາຊົນນະບົດ 01 ສະບັບ;
- ແນວລາວສ້າງຊາດ ນວ 01 ສະບັບ;
- ອົງການຈັດຕັ້ງມະຫາຊົນ ນວ 04 ສະບັບ;
- ສໍາເນົາໄວ້ 08 ສະບັບ;